## ບົດແນະນຳ

# ສະຫລຸບເລື່ອງການປະກາດໃນແຂວງອາເຊຍ

*ຫຼັກສູດໂປໂລເຫຼັ້ມທີ່ 3 ນີ້ ສອນຕັ້ງແຕ່ໂປໂລເລີ່ມອອກໄປປະກາດພະທຳເທື່ອທີ່ສາມ ເຖິງເສຍຊີວິດແລະກ່າວເລື່ອງ ຄຼິດສະຕະຈັກໃນແຂວງອາເຊຍດ້ວຍ.*

- *ໝາຍເຫດ: ແຂວງອາເຊຍໃນສະໃໝນັ້ນ ບໍ່ແມ່ນອັນດຽວກັບທະວີບອາຊີໃນສະໃໝນີ້ ໃນສະໃໝນີ້ ດິນແດນນັ້ນເປັນສ່ວນທິດຕາເວັນຕົກຂອງປະເທດຕູລະກີ.*

**1** ເມື່ອໂປໂລເດີນທາງໄປປະກາດເທື່ອທີ່ສາມ ເພິ່ນມີເປົ້າໝາຍວ່າຈະປະກາດໃນແຂວງອາເຊຍເປັນຕົ້ນ. ສູນກາງ ຂອງການປະກາດພະທຳໃນແຂວງອາເຊຍເປັນເມືອງເອເຟໂຊ.

ກ. ຂ່າວປະເສີດຂອງພະເຢຊູ ແຜ່ອອກໄປຂະໜາດໃດ ໃນແຂວງອາເຊຍ?
(ອ່ານ ກຈກ 19:10 ແລະ 26)________________________________________

ຂ. ໃນກິດຈະການບົດທີ 19 ຕະຫຼອດຕັ້ງແຕ່ຂໍ້ 1 - 41 ກ່າວເລື່ອງໂປໂລໃນເມືອງໃດ?

________________________________________________________

**2** ກ່ອນທີ່ໂປໂລຈະລົງມືປະກາດພະທຳແທ້ ໆ ໃນເມືອງເອເຟໂຊນັ້ນ ເພິ່ນຍັງເປັນຫ່ວງເຂົາຢູ່.

ກ. ໃນ ກຈກ 16:6 ເປັນຫຍັງໂປໂລບໍ່ໄດ້ໄປປະກາດພະທຳກ່ອນ? ________________

ຂ. ໃນ ກຈກ 18:18-21 ໂປໂລປະໃຜໄວ້ໃນເອເຟໂຊ? ________________________

ຫຼັງຈາກໂປໂລປະກາດພະທຳ ໃນແຂວງອາເຊຍ (ການປະກາດເທື່ອ ທີ່ 3) ເພິ່ນກັບໄປຢັ້ງມຢາມຄຼິດສະຕະ ຈັກທີ່ຕັ້ງຢູ່ກ່ອນໃນມາເກໂດເນຍ ແລະ ອະຂາຢາ ຈາກນັ້ນເພິ່ນລົງ ເຮືອສະເພົາກັບໄປບ້ານ. ເຮືອນັ້ນຈອດໃກ້ຄຽງກັບເມືອງເອເຟໂຊ ດັ່ງນັ້ນໂປໂລມີໂອກາດເຫັນພີ່ນ້ອງໃນເມືອງເອເຟໂຊອີກ (ກຈກ 20) ໃຫ້ເບິ່ງແຜນທີ່ຂ້າງຂວານີ້.



**3** ກ. ໃຫ້ອ່ານ ກຈກ 20:17-18. ເຖົ້າແກ່ຈາກຄຼິດສະຕະຈັກໃດມາຫາໂປໂລ? ___________

ຂ. ເຂົາພົບກັນຢູ່ໃສ? ______________________________________________

ຄ. ໃຫ້ອ່ານ ກຈກ 20:31-35 ໂປໂລເຕືອນສະຕິເຂົາຈັກປີຜ່ານມາແລ້ວ? _____________

ງ. ໂປໂລເຮັດຢ່າງໃດເພື່ອຫາສິ່ງທີ່ຕ້ອງການ? ________________________________

ຈ. ໃຫ້ອ່ານ ກຈກ 20:28-30 ໂປໂລເຕືອນວ່າ ຈະມີຄົນມາສັກຊວນພວກສິດຢ່າງໃດ?

_______________________________________________________________

ສ. ໂປໂລກ່າວຄຳປາໃສເປັນເທື່ອສຸດທ້າຍຕໍ່ພວກເຖົ້າແກ່ທີ່ເມືອງເອເຟໂຊໃນ ກຈກ ບົດທີ 20 ຂໍ້ໃດເຖິງຂໍ້ໃດ? __________________________________________________

**4** ຈາກນັ້ນອີກຫຼາຍປີ ໂຢຮັນທີ່ເປັນສາວົກຂອງພະເຢຊູ ຂຽນຈົດໝາຍໄປເຖິງຄຼິດສະຕະຈັກຕ່າງໆ ໃນແຂວງອາເຊຍ. ໃນພະທຳ ພະນິມິດ ບົດ 1:4 ເຫັນວ່າ ໂຢຮັນຂຽນໄປເຖິງຄຼິດສະຕະຈັກໃນແຂວງອາເຊຍຈັກບ່ອນ? ________________________________________

- *ແຜນທີ່ຂ້າງຂວານີ້ຂະຫຍາຍມາຈາກແຜນທີ່ໜ້າ 1. ທີ່ສະແດງພື້ນທີ່ ເມືອງເອເຟໂຊ ຢ່າງລະອຽດດີ.*
- *ຄຳເຕືອນຈາກໂຢຮັນ ເຫັນໃນ ພະນິມິດ 2:1 ເຖິງ 3:22*




**5** ໃຫ້ທ່ານອ່ານຄຳເຕືອນສະຕິຂອງໂຢຮັນທີ່ຂຽນ ໄປເຖິງຄຼິດສະຕະຈັກເມືອງເອເຟໂຊ ໃນ ພນມ 2:1-7.

ກ. ໃນ ກຈກ 20:28-30 ໂປໂລສອນເລື່ອງຄົນສອນບໍ່ຈິງທີ່ຈະມາ ໃນ ພນມ 2:2 ເຫັນວ່າມີຄົນຢ່າງໃດມາຫຼອກ ລວງເຂົາ? __________________________________________

ຂ. ພີ່ນ້ອງສ່ວນຫຼາຍເຊື່ອຟັງສາວົກປອມນັ້ນບໍ່? ______________________________

ຄ. ໃນ ພນມ 2:4 ເຫັນວ່າເຂົາປະຖິ້ມຫຍັງ? ___________________________________

ງ. ໃນ ພນມ 2:5 ໂຢຮັນເຕືອນເຂົາວ່າຈົ່ງເຮັດຫຍັງ? ____________________________

*ຈົ່ງພິຈາລະນາ*

*ໂປໂລສອນເລື່ອງຄວາມຮັກໃນພະທຳ ເອເຟໂຊ 1:15-16; 3:17-19; 4:2-3; 4:15-16; 5:2 ແລະ 6:23-24. ໃຫ້ພວກເຮົາອ້ອນວອນຂໍພະອົງໂຜດໃຫ້ເຮົາມີຄວາມຮັກຢ່າງນັ້ນ!*

ກ່ອນປະຊຸມອາທິດໜ້າໃຫ້ຮຽນການບ້ານທັງພາກຕົ້ນແລະພາກປາຍ

ຢ່າລືມຕອບບົດເສັງດ້ວຍ

| ຕອບ: | |
|---|---|
| **1** | *ກ. ເຖິງຄົນທັງຫຼາຍໃນແຂວງອາເຊຍ (ເກືອບທົ່ວແຂວງອາເຊຍ) ຂ. ເອເຟໂຊ.* |
| **2** | *ກ. ພະວິນຍານບໍລິສຸດຫ້າມ. ຂ. ປີຊະກີລາ ແລະ ອາກີລາ.* |
| **3** | *ກ. ຄຼິດສະຕະຈັກເອເຟໂຊ. ຂ. ເມືອງມີເລໂຕ. ຄ. 3 ປີ.* |
| | *ງ. ເຮັດດ້ວຍມືທັງສອງຂ້າງ. ຈ. ໃຫ້ຫຼີງຕາມເຂົາໄປ. ສ. ຂໍ້ 17-38.* |
| **4** | *7 ບ່ອນ.* |
| **5** | *ກ. ສາວົກປອມ. ຂ. ບໍ່ເຊື່ອສ່ວນຫຼາຍ. ຄ. ຄວາມຮັກເດີມ.* |
| | *ງ. ຈົ່ງກັບໃຈເສຍໃໝ່ ແລະ ເຮັດຢ່າງເດີມ.* |